# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນເສົາ ວັນທີ 18 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈຳວັນເສົາ ວັນທີ 18 ກັນຍາ ປີ 2021**.

ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 17 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **6,504** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **467** ຄົນ:

- **ກໍລະນີນໍາເຂົ້າ ມີ 83 ຄົນ** ຈາກ ແຂວງ ສະຫວັນນະເຂດ 72 ຄົນ, ສາລະວັນ 9 ຄົນ, ແລະ ຫຼວງພະບາງ 2 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານແດນສາກົນ.
- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 384 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**
  - **ນະຄອນຫຼວງ 265 ຄົນ:**

1. ກຸ່ມໂຮງງານ ອານພິລາວ (ເກັບຕົວຢ່າງໃນໂຮງງານ) ພົບເຊື້ອ 247 ຄົນ ແມ່ນ ເຮັດວຽຢູ່ໂຮງງານຕັດຫຍິບ ອັນພີລາວ ບ້ານໜອງທາເໜືອ, ເມືອງຈັນທະບູລີ ແລະ ມີປະຫວັດພົວພັນກັບຊ່າງຈັກຊ່າງໄຟ (ຄົນໄທ) ຈາກໂຮງງານ ອິນເຕີເມດ ແຟຊັນ (ທີ່ຕິດເຊື້ອ) ເຊິ່ງໄດ້ໄປແປງຈັກໃຫ້

2. ໂຄງການສຶກສາ LACOVISS: ມີ 03 ຄົນ

- 01 ຄົນ ຈາກບ້ານ ໜອງຈັນ, ເຈົ້າໜ້າທີ່ຕຳຫລວດ
- 02 ຄົນ ແມ່ນ ຈາກ ບ້ານ ໜອງທາເໜືອ (ພໍ່ ແລະ ລູກ ສາວ), ເມືອງ ຈັນທະບູລີ

3. ຈຸດເກັບຕົວຢ່າງຈາກບຶງຂະຫຍອງ ພົບເຊື້ອ 12 ຄົນ:

- ບ້ານ ດ່ານຊ້າງ, ເມືອງ ໄຊທານີ 01 ຄົນ
- ບ້ານ ຫົວຂົວ, ເມືອງ ໄຊເສດຖາ  02 ຄົນ (ພະນັກງານ ບໍລິສັດ ເອກະຊົນ ຊີເຄແອວ)
- ບ້ານ ສະພັງເມິກ, ເມືອງ ໄຊທານີ 01 ຄົນ
- ບ້ານ ໜອງທາເໜືອ, ເມືອງ ຈັນທະບູລີ 03 ຄົນ (ເຮັດວຽກຢູ່ໂຮງງານ ອານພີລາວ 01 ຄົນ ແລະ ຄ້າຂາຍໜ້າໂຮງງານ)
- ບ້ານ ສີເກີດ, ເມືອງນາຊາຍທອງ 03 ຄົນ (01 ຄົນ ແມ່ນ ຄ້າຂາຍໃນ ຕະຫລາດອິດຊີ)

4. ກຸ່ມເມືອງໄຊທານີ 2 ຄົນ

5. ຈາກໂຮງໝໍມະໂຫສົດ 1 ຄົນ ຈາກ ບ້ານຫ້ວຍຫົງ, ເມືອງ ຈັນທະບູລີ,

ໂຮງງານ ອານພິລາວ (ເກັບຕົວຢ່າງຈາກ ໂຮງໝໍມະໂຫສົດ)

- **ຈຳປາສັກ 41 ຄົນ**
- **ຫຼວງພະບາງ 30 ຄົນ**
- **ຄຳມ່ວນ 26 ຄົນ:** ທັງໝົດ 12 ບ້ານ ຈາກ 3 ເມືອງ ຄື:
    - ທ່າແຂກ 9 ບ້ານ
    - ບົວລະພາ 2 ບ້ານ
    - ນາກາຍ 1 ບ້ານ
- **ສະຫວັນນະເຂດ 20 ຄົນ:** ໃນນີ້ 13 ຄົນ ແມ່ນຈາກສະຖານທີ່ຄຸມຂັງ
- **ຫຼວງນ້ຳທາ 2 ຄົນ**

- ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.
- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **18,814 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **3,665** ຄົນ.
- **ບ້ານໃໝ່ທີ່ກຳນົດເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ 2 ບ້ານ: ບ້ານໂນນແສງຈັນ ແລະ ບ້ານດອນໜູນ ເມືອງໄຊທານີ.**

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ **ນະຄອນຫຼວງວຽງຈັນ** ຢູ່ **ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ

ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.

- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 17 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **2,482** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **122** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **7,626** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **228,347,421** (534,520 ໃໝ່), ເສຍຊີວິດທັງໝົດ **4,692,117** (8,293 ໃໝ່), ປິ່ນປົວຫາຍດີ **204,919,922** (496,321 ໃໝ່). ສໍາລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ**, **ອິນເດຍ** ແລະ **ບຣາຊິວ**.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ **14,555** ຄົນ ແລະ ເສຍຊີວິດໃນມື້ດຽວ **171** ຄົນ, ຮອງລົງມາແມ່ນ **ສສ**

**ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ 11,521 ຄົນ ແລະ ເສຍຊີວິດໃນມື້ດຽວ 212 ຄົນ.

➢ **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ເພື່ອຕັດ ຫຼື ຢຸດວົງຈອນ ການລະບາດຂອງພະຍາດ ໃຫ້ຢຸດຕິລົງໂດຍໄວ, ຂໍການຮ່ວມມື, ຮ່ວມແຮງຮ່ວມໃຈ ເປັນຈິດໜຶ່ງໃຈດຽວ ຈາກທຸກພາກສ່ວນໃນສັງຄົມ ປະຕິບັດຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1177/ຫສນຍ, ລົງວັນທີ 15 ກັນຍາ 2021 ຢ່າງເຄັ່ງຄັດ. ພ້ອມດຽວກັນນັ້ນ, ບາງບ້ານ, ບາງເມືອງ ແລະ ແຂວງ ກໍ່ມີມາດຕະການ ຫ້າມການເຂົ້າ-ອອກ ຫຼື ປິດບາງສະຖານທີ່ ເຊິ່ງການ ປະຕິບັດທັງໝົດນີ້ ອາດເຮັດໃຫ້ເກີດຄວາມບໍ່ສະດວກແກ່ບັນດາທ່ານ ໃນການດຳລົງ ຊີວິດປະຈຳວັນປົກກະຕິ ແຕ່ຂໍຮຽກຮ້ອງໃຫ້ທຸກໆທ່ານໃຫ້ຄວາມຮ່ວມມື ແລະ ຮ່ວມໃຈ

ກັນ ປະຕິບັດໃຫ້ດີທີ່ສຸດ ເພື່ອຄວາມປອດໄພຂອງທ່ານເອງ, ຄົນໃນຄອບຄົວ, ຄົນອ້ອມຂ້າງ ແລະ ຊຸມຊົນ;

- ສຳລັບ ແຂວງ ແລະ ເມືອງທີ່ມີຄວາມສ່ຽງນັ້ນ ຄະນະສະເພາະກິດກໍ່ໄດ້ເພີ່ມທະວີການກະເຝົ້າລະວັງ, ກວດຫາ ແລະ ເກັບຕົວຢ່າງ (ຄົງທີ່ ແລະ ເຄື່ອນທີ່) ເພື່ອຊອກຄົ້ນຫາຜູ້ຕິດເຊື້ອໂດຍໄວ ແລະ ຄວບຄຸມສະພາບການລະບາດໃຫ້ຈຳກັດຢູ່ໃນວົງແຄບ;

- ສິ່ງສຳຄັນ, ຂໍຮຽກຮ້ອງມາຍັງ ບັນດາທ່ານ ຜູ້ທີ່ຕິດເຊື້ອ ແລະ ຜູ້ທີ່ໄດ້ສຳພັດໃກ້ຊິດກັບຜູ້ຕິດເຊື້ອ ຈົ່ງໃຫ້ຄວາມຮ່ວມມື ນຳເຈົ້າໜ້າທີ່ກ່ຽວຂ້ອງ ໃນການໃຫ້ຂໍ້ມູນຄວາມຈິງ, ບໍ່ຄວນປິດບັງປະຫວັດການເຄື່ອນໄຫວ ເພາະຂໍ້ມູນທັງໝົດແມ່ນກຸນແຈສຳຄັນ ທີ່ຈະນຳໄປສູ່ການຄົ້ນຫາຜູ້ສຳຜັດໃກ້ຊິດ ແລະ ຫຼຸດຜ່ອນການແຜ່ເຊື້ອເປັນວົງກ້ວາງໃນຊຸມຊົນ;

- ອີກເທື່ອນຶ່ງ ການຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ໝັ່ນລ້າງມືເລື້ອຍໆດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70% ຂຶ້ນໄປ, ບໍ່ໄປສະຖານທີ່ສ່ຽງ, ບໍ່ໄປສະຖານທີ່ແອ

ອັດ, ບໍ່ຊຸມແຊວກັນເປັນກຸ່ມ. ການປະຕິບັດທັງໝົດນີ້ ກໍ່ຍັງແມ່ນວິທີການປ້ອງກັນຕົນເອງ ຈາກເຊື້ອພະຍາດ ໂຄວິດ-19 ທີ່ດີທີ່ສຸດ ໃນປັດຈຸບັນ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳເສົາ ວັນທີ 18 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.**

**(ຂໍຂອບໃຈ)**